# ໂຄງການບໍລິການທາງການແພດໃຫ້ແກ່ຜູ້ທຸກຍາກ (MISP)

## ການປະຕິເສດ ແລະຂໍ້ມູນການຮ້ອງຮຽນ

## ໃບຄຳຮ້ອງ MISP ຂອງທ່ານຖືກປະຕິເສດບໍ?

ຖ້າທ່ານຖືກປະຕິເສດຈາກ MISP ເພາະວ່າທ່ານບໍ່ໄດ້ສະໝັກຂໍ Medi-Cal ຫຼືປະກັນໄພຜ່ານ Covered California (Covered CA), ກ່ອນອື່ນໝົດທ່ານຕ້ອງສະໝັກຂໍທາງເລືອກການດູແລສຸຂະພາບເຫຼົ່ານັ້ນ, ນອກຈາກວ່າທ່ານມີເຫດຜົນທີ່ດີທີ່ບໍ່ໄດ້ສະໝັກ (ຕົວຢ່າງ, ບໍ່ມີຄວາມສາມາດທາງດ້ານຮ່າງກາຍ ຫຼືຈິດໃຈ). ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອຄ່າເບ້ຍປະກັນ ຫຼືການທົດແທນການຈ່າຍຊ່ວຍ. ຖ້າທ່ານສະໝັກຂໍ ຫຼືຖືກປະຕິເສດຈາກ Medi-Cal ແລະປະກັນໄພ Covered CA ຫຼືມີເຫດຜົນທີ່ດີທີ່ບໍ່ໄດ້ສະໝັກ, ທ່ານອາດຈະມີສິດໄດ້ຮັບ MISP. ທ່ານຕ້ອງໃຫ້ເອກະສານກ່ຽວກັບ Medi-Cal ຫຼືການປະຕິເສດຂອງ Covered CA.



ທ່ານຈະໄດ້ຮັບແຈ້ງການເປັນລາຍລັກອັກສອນ ຖ້າໃບຄຳຮ້ອງຂໍ MISP ຖືກປະຕິເສດ ເຊິ່ງກ່າວເຖິງເຫດຜົນວ່າ ເປັນຫຍັງທ່ານຈິ່ງບໍ່ມີສິດໄດ້ຮັບ MISP.

ຖ້າທ່ານຖືກປະຕິເສດຈາກ MISP ເພາະວ່າລາຍໄດ້ຂອງທ່ານມີສູງຫຼາຍ, ທ່ານອາດຈະສາມາດຂໍການສະຫຼະສິດຄວາມລຳບາກທາງດ້ານການເງິນ ຖ້າທ່ານຈ່າຍອັນໃດໜຶ່ງຕໍ່ໄປນີ້ຄື:

- ການຈ່າຍຕາມຄຳສັ່ງຂອງສານ
- ພາສີທີ່ຕິດຄ້າງຂອງປີກ່ອນ
- ແຜນການຊຳລະໜີ້ທາງການແພດຜ່ານມາ

**ການອຸທອນທາງດ້ານບໍລິຫານທີ່ເປັນທຳ**

ທ່ານຍັງສາມາດຍື່ນຂໍການອຸທອນທາງດ້ານບໍລິຫານທີ່ເປັນທຳໄດ້ ຖ້າທ່ານບໍ່ເຫັນດີກັບການກະທຳໃດໜຶ່ງທີ່ໄດ້ເຮັດ ຫຼືບໍ່ໄດ້ເຮັດໂດຍທາງ MISP. ຕົວຢ່າງ, ຖ້າທ່ານຖືກປະຕິເສດຈາກ MISP ເພາະວ່າທ່ານໄດ້ເຂົ້າຫາການດູແລສຸຂະພາບຈາກບ່ອນອື່ນ, ເຊັ່ນ Medi-Cal ຫຼືຜ່ານ Covered CA, ແຕ່ບໍ່ໄດ້ສະໝັກຂໍ ຫຼືບໍ່ໄດ້ຈ່າຍຄ່າປະກັນໄພຂອງທ່ານ ແລະທ່ານເຊື່ອວ່າທ່ານມີເຫດຜົນທີ່ດີວ່າ ເປັນຫຍັງທ່ານຈິ່ງບໍ່ໄດ້ສະໝັກຂໍ ຫຼືບໍ່ໄດ້ຈ່າຍ, ທ່ານສາມາດຍື່ນໃບສະເໜີຂໍການອຸທອນທາງດ້ານບໍລິຫານທີ່ເປັນທຳໄດ້. ທ່ານຍັງສາມາດຍື່ນຂໍການອຸທອນທາງດ້ານບໍລິຫານທີ່ເປັນທຳໄດ້ ຖ້າທ່ານມີ MISP, ແຕ່ະຖືກປະຕິເສດການບໍລິການທາງການແພດ ແລະທ່ານເຊື່ອວ່າ ທ່ານມີເຫດຜົນທີ່ດີ ທີ່ MISP ຄວນຮັບຜິດຊອບການບໍລິການ. ທ່ານຍັງສາມາດຍື່ນຂໍການອຸທອນທາງດ້ານບໍລິຫານທີ່ເປັນທຳໄດ້ ຖ້າທ່ານມີ MISP, ແຕ່ະຖືກປະຕິເສດການບໍລິການທາງການແພດ ແລະທ່ານເຊື່ອວ່າ ທ່ານມີເຫດຜົນທີ່ດີ ທີ່ MISP ຄວນຮັບຜິດຊອບການບໍລິການ.

- ທ່ານອາດຈະເອົາຂໍ້ມູນກ່ຽວກັບວິທີຍື່ນການອຸທອນໄດ້ທີ່ຫ້ອງການໜ່ວຍ MISP ທີ່ 1221 Fulton Mall, Fresno, CA 93721.
- ທ່ານຕ້ອງຍື່ນໃບສະເໜີເປັນລາຍລັກອັກສອນ ເຊິ່ງຕ້ອງລວມມີເຫດຜົນ ຫຼືການກະທຳສະເພາະທີ່ທ່ານກຳລັງ ອຸທອນ, ຄຳອະທິບາຍເຫດຜົນທີ່ດີ ຫຼືຄວາມຍາກລຳບາກ ທີ່ທ່ານເຊື່ອວ່າທ່ານໄດ້ຮັບ ທີ່ທ່ານຢາກໃຫ້ໄດ້ຮັບການພິຈາລະນາຢູ່ໃນການອຸທອນ, ແລະເອກະສານໃດໜຶ່ງທີ່ທ່ານຕ້ອງສະແດງເປັນຫຼັກຖານ ຫຼືພິສູດຄຳສະເໜີຂອງທ່ານ ເພື່ອໃຫ້ມີການພິຈາລະນາຄຳຕັດສິນຄືນໃໝ່ ຫຼືການກະທຳ ຫຼືການບໍ່ໄດ້ກະທຳຂອງ MISP ທີ່ທ່ານບໍ່ພໍໃຈ.
- ທ່ານຕ້ອງຍື່ນໃບອຸທອນເປັນລາຍລັກອັກສອນຂອງທ່ານພາຍໃນ <u>10 ວັນເຮັດວຽກຂອງຄາວຕີ້</u> ນັບຈາກວັນທີ MISP ອອກຄຳຕັດສິນທີ່ທ່ານບໍ່ພໍໃຈນັ້ນ.

## ທ່ານມີໃບຮ້ອງທຸກກ່ຽວກັບການບໍລິການ MISP ບໍ? ໂທຫາເບີນີ້:

ເຈົ້າໜ້າທີ່ MISP ຂອງຄາວຕີ້ເຟຣສໂນທີ່ເບີ (559) 600-7069 ຫຼື (559) 600-3200.

## ທ່ານຕ້ອງການຍື່ນໃບຮ້ອງທຸກບໍ?

**ກ່ຽວກັບໂຮງໝໍ:** ໂທຫາກົມການອະນຸຍາດ ແລະການຢັ້ງຢືນຂອງລັດຄາລີຟໍເນຍ
ຫ້ອງການເຟຣສໂນທີ່ເບີ (800) 554-0351

**ກ່ຽວກັບທ່ານໝໍ:** ໂທຫາຄະນະຮັບຜິດຊອບທາງການແພດຂອງລັດຄາລີຟໍເນຍທີ່ເບີ 1 (800) 633-2322

**ກ່ຽວກັບການບໍລິການແປພາສາ:** ໂທຫາຫ້ອງການສິດທິພົນລະເມືອງທີ່ເບີ (415) 437-8310 ຫຼື TDD (415) 437-8311

Department of Public Health
www.fcdph.org